ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ການເຂົ້າຢ້ຽມຂໍ່ານັບ ທ່ານ ຮອງຜູ້ວ່າການ ທຫລ ຂອງ ທ່ານ ຫົວໜ້າທີມປະເມີນເສດຖະກິດມະຫາພາກ ສປປ ລາວ ຂອງ IMF




ໃນຕອນເຊົ້າຂອງວັນທີ 10 ມິຖຸນາ 2021 ທີ່ທະນາຄານແຫ່ງ ສປປ ລາວ ໄດ້ມີການຈັດກອງປະຊຸມທາງໄກ (Video Conference) ລະຫວ່າງ ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະ (ກົມຄຸ້ມຄອງທະນາຄານທຸລະກິດ, ກົມບໍລິການທະນາຄານ ແລະ ກົມຮ່ວມມືສາກົນ) ແລະ ທ່ານ Alasdair Scott, ຫົວໜ້າທີມປະເມີນເສດຖະກິດມະຫາພາກ ສປປ ລາວ ຂອງ IMF (Article IV mission chief) ພ້ອມດ້ວນຄະນະ (ຫ້ອງການ IMF ປະຈໍາ ສປປ ລາວ). ຈຸດປະສົງຂອງກອງປະຊຸມດັ່ງກ່າວ ແມ່ນເພື່ອເປັນການຢ້ຽມຂໍ່ານັບ ທ່ານຮອງຜູ້ວ່າການ ທຫລ ຂອງ ທ່ານ ຫົວໜ້າທີມປະເມີນເສດຖະກິດມະຫາພາກຄົນໃໝ່ ເນື່ອງໃນໂອກາດເຂົ້າຮັບຕໍາແໜ່ງດັ່ງກ່າວນັບແຕ່ປີ 2021 ເປັນຕົ້ນໄປ. ຜົນການປຶກສາຫາລື ສາມາດສັງລວມຫຍໍ້ໄດ້ດັ່ງນີ້:

ທ່ານ Alasdair Scott ໄດ້ລາຍງານຕໍ່ ທ່ານຮອງຜູ້ວ່າການ ທຫລ ວ່າ: ປະຈຸບັນ ຜູ້ກ່ຽວຮັບໜ້າທີ່ເປັນຫົວໜ້າທີມປະເມີນເສດຖະກິດມະຫາພາກ ສປປ ລາວ ແລະ ກໍາປູເຈຍ. ກ່ອນໜ້າມາຮັບຕໍາແໜ່ງດັ່ງກ່າວ, ຜູ້ກ່ຽວໄດ້ເປັນຫົວໜ້າເມີນປະເມີນເສດຖະກິດຂອງຫຼາຍປະເທດເປັນຕົ້ນແມ່ນ: ປະເທດ Finland, Czech Republic, Montenegro ແລະ United Kingdom. ພ້ອມນີ້, ໃນໂອກາດດັ່ງກ່າວ ຜູ້ກ່ຽວຍັງໄດ້ສອບຖາມກ່ຽວກັບຄວາມຕ້ອງການຂອງ ສປປ ລາວ ກໍ່ຄື ທຫລ ໃນດ້ານຕ່າງໆ ຈາກ IMF ໃນຕໍ່ໜ້າ.

ຕໍ່ກັບບັນຫາດັ່ງກ່າວ, ທ່ານ ຮອງຜູ້ວ່າການ ທຫລ ໄດ້ແຈ້ງໃຫ້ກັບ IMF ຊາບວ່າ: ໃນໄລຍະຜ່ານມາ, ການຮ່ວມມືລະຫວ່າງ ສປປ ລາວ ກໍ່ຄື ທຫລ ແລະ IMF ແມ່ນດຳເນີນໄປຢ່າງມີປະສິດທິພາບຊຶ່ງ ທຫລ ໄດ້ຮັບການຊ່ວຍເຫຼືອຈາກ IMF ໃນຫຼາຍດ້ານ ເປັນຕົ້ນແມ່ນການຊ່ວຍເຫຼືອທາງດ້ານວິຊາການ ໃນການສ້າງບັນດາເຄື່ອງມືທາງການເງິນ ແລະ ເຄື່ອງມືນະໂຍບາຍເງິນຕາ. ໂດຍສະເພາະ, ໃນປະຈຸບັນ IMF ກໍ່ກຳລັງໃຫ້ການຊ່ວຍເຫລືອ ທຫລ ເພື່ອຫັນການຄຸ້ມຄອງທະນາຄານທຸລະກິດໄປສູ່ຫຼັກການ Basel II ເທື່ອລະກ້າວ.

ພ້ອມນີ້, ທ່ານ ຮອງຜູ້ວ່າການ ທຫລ ກໍ່ໄດ້ແຈ້ງໃຫ້ IMF ຊາບວ່າ: ການແຜ່ລະບາດຂອງ COVID-19 ໄດ້ສົ່ງຜົນກະທົບຕໍ່ກັບເສດຖະກິດຂອງ ສປປ ລາວ ແລະ ຂອງໂລກ. ໃນນັ້ນ, ທຫລ ກໍ່ໄດ້ປະກອບສ່ວນແກ້ໄຂບັນຫາດັ່ງກ່າວ ຜ່ານການອອກຫຼາຍມາດຕະການເປັນຕົ້ນໃນປີ 2021 ໄດ້ອອກນະໂຍບາຍເລື່ອນຊຳລະເງິນກູ້ພາກຊົມໃຊ້ຂອງບັນດາສະຖາບັນການເງິນຈຸລະພາກ ເປັນເວລາ 3 ເດືອນ. ອີງໃສ່ສິ່ງທ້າທາຍທາງເສດຖະກິດເຫັນວ່າຈະເພີ່ມທະວີຄວາມຮຸນແຮງຂຶ້ນໃນຕໍ່ໜ້າ, ສະນັ້ນ, ການຮ່ວມມືລະຫວ່າງທັງສອງອົງກອນ ເຫັນວ່າຕ້ອງໄດ້ຮັດແໜ້ນຂຶ້ນຕື່ມ ເພື່ອຮັບປະກັນການຮັບມືກັບບັນດາຄວາມສ່ຽງຕ່າງໆ ໂດຍສະເພາະ ທຫລ ກໍ່ຕ້ອງການບັນດາຄຳແນະນຳທາງດ້ານນະໂຍບາຍຈາກ IMF ຜ່ານການຈັດກອງປະຊຸມສຳມະນາທາງດ້ານວິຊາການ. ສຳລັບການຈັດການປະເມີນ Article IV Consultationໃຫ້ແກ່ ສປປ ລາວ ປະຈຳປີ 2021 ແມ່ນຄາດວ່າຈະຖືກຈັດຂຶ້ນໃນລະຫວ່າງວັນທີ 6-17 ທັນວາ 2021 ຜ່ານທາງ Video Conference.

**# ຂ່າວ-ພາບ: ກົມຮ່ວມມືສາກົນ, ທຫລ**